ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===oo(000)oo===---

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1517 /ອຄ.ກຂອ.

ນະຄອນຫລວງວຽງຈັນ, ວັນທີ 12 SEP 2008

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ

## ວ່າດ້ວຍການປະກາດນຳໃຊ້ລະບຽບການແຫຼ່ງກຳເນີດສິນຄ້າຂອງອາຊຽນສະບັບປັບປຸງ.

- ອີງຕາມໜັງສືແຈ້ງຢືນຢັນຮັບຮອງການນຳໃຊ້ລະບຽບການແຫຼ່ງກຳເນີດສິນຄ້າອາຊຽນສະບັບປັບປຸງ ຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1313/ກງ ລົງວັນທີ 11 ມິຖຸນາ 2008
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ ລົງວັນທີ 17.08.2006 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະການຄ້າ.
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ.

### ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ

ມາດຕາ 01: ປະກາດນຳໃຊ້ລະບຽບແຫຼ່ງກຳເນີດສິນຄ້າອາຊຽນສະບັບປັບປຸງ " Revised CEPT-AFTA ROO" ຊຶ່ງໃນນັ້ນ ລວມທັງ ລະບຽບຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດ (OCP) ແລະ ລະບຽບແຫຼ່ງກຳເນີດສະເພາະທີ່ນຳໃຊ້ກັບແຕ່ລະຜະລິດຕະພັນ (PSR) ໃນການຢັ້ງຢືນແຫຼ່ງກຳເນີດ ໃຫ້ແກ່ສິນຄ້າສົ່ງອອກ ຂອງ ສປປ ລາວ ໄປ ປະເທດສະມາຊິກອາຊຽນອື່ນ ໂດຍການນຳໃຊ້ແບບຟອມ D ສະບັບປັບປຸງ.

ມາດຕາ 02: ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ຮັບຜິດຊອບ ແນະນຳ ແລະ ເຜີຍແຜ່ ວິທີຈັດຕັ້ງປະຕິບັດລະອຽດກ່ຽວກັບລະບຽບການດັ່ງກ່າວໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ ຖືກປະຕິບັດຢ່າງໄດ້ຮັບຜົນດີ.

ມາດຕາ 03: ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ ນັບແຕ່ ວັນທີ 01 ເດືອນ ຕຸລາ 2008 ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະການຄ້າ

ກະຊວງອຸດສາຫະກຳແລະການຄ້າ

ລັດຖະມົນຕີ

ດຣ. ນາມ ວິຍະເກດ